ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ພະແນກສຶກສາທິການ ແລະ ກິລາແຂວງອັດຕະປື

1150

ເລກທີ່ ........../ສກຂ.ສຕຂສ
ວັນທີ:.............................. 29 SEP 2016

# ແຈ້ງການ

**ເຖິງ:** ພະແນກການຕ່າງໆອ້ອມຂ້າງແຂວງ, ຫ້ອງການໃນ 5 ຕົວເມືອງ, ກອງບັນຊາການ ປກຊ, ກອງບັນຊາການ ປກສ, ໂຮງຮຽນ, ໂຮງໝໍ, ພະນັກງານ, ນັກຮຽນ, ນັກສຶກສາ ແລະ ພໍ່-ແມ່ ປະຊາຊົນ ບັນດາເຜົ່າຊາບ:

**ເລື່ອງ:** ສູນໄອຊີທີ ພະແນກສຶກທິການ ແລະ ກິລາແຂວງ ອັດຕະປື ຈະເປີດການຮຽນ-ການສອນ ຄອມພິວເຕີ ລະດັບພື້ນຖານ

**ອີງຕາມ:** ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ປະຈຳ ພະແນກສຶກສາທິການ ແລະ ກິລາແຂວງ ສະບັບເລກທີ 2870/ສສກ.ຈຕ ລົງວັນທີ 29/6/2013

**ອີງຕາມ:** ຂໍ້ຕົກລົງຂອງ ຫົວໜ້າ ພະແນກສຶກສາທິການ ແລະ ກິລາແຂວງ ວ່າດ້ວຍການອະນຸມັດ ໃຫ້ສູນ ໄອຊີທີ ພະແນກສຶກສາທິການ ແລະ ກິລາ ແຂວງ ຈັດການຮຽນ-ການສອນ ຄອມພິວເຕີ ລະດັບພື້ນຖານ ພາກເສົາ-ອາທິດ ແລະ ພາກຄ່ຳ ໃຫ້ສັງຄົມທົ່ວໄປ ສະບັບ ເລກທີ:............/ສກຂ ລົງ ວັນທີ:............

ຫົວໜ້າ ພະແນກສຶກສາທິການ ແລະ ກິລາແຂວງ ຂໍຖືເປັນກຽດ ແຈ້ງມາຍັງທ່ານຊາບວ່າ: ປັດຈຸບັນ ສູນ ໄອຊີທີ ພະແນກສຶກສາທິການ ແລະ ກິລາ ແຂວງ ອັດຕະປື ຫຼັງ ອາຄານ 3 ຊັ້ນ ຕັ້ງຢູ່ໂຮງຮຽນ ມສ ຈັນທາ ຈະໄດ້ເປີດການຮຽນ-ການສອນ ຄອມພິວເຕີ ລະດັບພື້ນຖານ ກ່ຽວກັບ ການນຳໃຊ້ ໂປຣແກຣມ *Microsoft office 2010* ເຊັ່ນ: ການນຳໃຊ້ word, Excel ແລະ PowerPoint ເຊິ່ງການຮຽນ-ການສອນດັ່ງກ່າວ ສູນໄອຊີທີ ພວກເຮົາ ຈະເປີດ ໃນ 2 ພາກ ຄື:

- ພາກ ເສົາ-ອາທິດ: ເລີ່ມເວລາ 8:00 ໂມງ ຫາ 10:00 ໂມງ
- ພາກຄ່ຳ (ຈັນ-ສຸກ) ເລີ່ມເວລາ 18:00ໂມງ ຫາ 20:00 ໂມງ

ຊຶ່ງແຕ່ລະພາກຈະໃຊ້ເວລາຮຽນ 3 ເດືອນ ເມື່ອສຳເລັດການຮຽນ-ການສອນ ຕາມໂຄງການຫຼັກສູດ ຫຼື ໄດ້ຕາມມາດຖານຕ່າງໆ ຂອງການວັດ ແລະ ປະເມີນຜົນ ແລ້ວ ພະແນກສຶກສາທິການ ແລະ ກິລາແຂວງ ຈະອອກໃບຢັ້ງຢືນ ໃຫ້ພວກກ່ຽວ ເພື່ອເປັນຫຼັກຖານ ຕາມລະບຽບ ຫຼັກການ.

- ຄ່າທຳນຽມ ຮຽນ 300 000 ກີບ /3ເດືອນ

☛ ເປີດຮັບສະໝັກເລີ່ມແຕ່: ວັນທີ: 3/10/2016 ຫາ ວັນທີ: 29/10/2016 ທີ່ຫ້ອງການ ສູນ ໄອຊີທີ ແຂວງ ຊຶ່ງຕັ້ງຢູ່ ໂຮງຮຽນ ມສ ຈັນທາ ໃນເວລາ ລັດຖະການ ໂທ: 030 550 3405 ແລະ 020 2288 9960

☛ ເປີດການຮຽນ-ການສອນ ວັນທີ: 31/10/2016 ເປັນຕົ້ນໄປ.

ດັ່ງນັ້ນ ຈຶ່ງແຈ້ງການມາຍັງ ທຸກພາກສ່ວນ ເພື່ອຮັບຊາບ

**ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງອັດຕະປື**

ພະແນກ ສຶກສາທິການ ແລະກິລາ

ຄຳພູນ ແກ້ວມາລາ